ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 045 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 7 ພຶດສະພາ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້

## ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2025) ໝວດທີ VI ມາດຕາ 68 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 20 ເມສາ 2025 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 31/ຄປຈ, ລົງວັນທີ 22 ເມສາ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 02 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 / 03 / 25

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຄັ້ງວັນທີ 18 ມີນາ 2025 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງກອງປະຊຸມຄັ້ງວັນທີ 20 ມີນາ 2025.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ　　　　　　　　　　　　　　　　ເລກທີ 75 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ມີນາ 2025

# ກົດໝາຍ
# ວ່າດ້ວຍການປົກຄອງທ້ອງຖິ່ນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກຂອງອົງການປົກຄອງທ້ອງຖິ່ນ ເພື່ອປັບປຸງ ແລະ ສ້າງ ອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ໂປ່ງໃສ ແລະ ເປັນລະບົບ ໃນທົ່ວປະເທດ ແນໃສ່ຮັບປະກັນການປະຕິບັດ ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ; ປົກປ້ອງຜົນປະໂຫຍດຂອງ ລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງປະຊາຊົນ, ປະກອບສ່ວນເຮັດໃຫ້ປະຊາຊົນ ຮັ່ງມີ ຜາສຸກ, ປະເທດຊາດມັ່ງຄັ່ງ ເຂັ້ມແຂງ, ສັງຄົມ ສາມັກຄີ ປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

### ມາດຕາ 2 (ປັບປຸງ) ການປົກຄອງທ້ອງຖິ່ນ

ການປົກຄອງທ້ອງຖິ່ນ ແມ່ນ ການຄຸ້ມຄອງບໍລິຫານລັດຂັ້ນທ້ອງຖິ່ນ.

ການປົກຄອງທ້ອງຖິ່ນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງອອກເປັນ ສາມຂັ້ນ ຄື ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ.

ຂັ້ນແຂວງ ມີ ນະຄອນຫຼວງ, ແຂວງ.

ຂັ້ນເມືອງ ມີ ເມືອງ, ນະຄອນ.

ຂັ້ນບ້ານ ມີ ບ້ານ.

**ມາດຕາ 3 (ປັບປຸງ) ຫຼັກການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປົກຄອງທ້ອງຖິ່ນ**

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປົກຄອງທ້ອງຖິ່ນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນເປັນເອກະພາບໃນການຄຸ້ມຄອງລັດ ທີ່ມີການແບ່ງຂັ້ນຄຸ້ມຄອງ, ຂັ້ນຕາແສງ ຂຶ້ນກັບຂັ້ນເມືອງ, ຂັ້ນເມືອງ ຂຶ້ນກັບຂັ້ນແຂວງ, ຂັ້ນແຂວງ ຂຶ້ນກັບລັດຖະບານ;

2. ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ຍົກສູງຄວາມຮັບຜິດຊອບ ຂອງອົງການປົກຄອງທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງປະຊາຊົນ ໂດຍຜ່ານສະພາປະຊາຊົນທ້ອງຖິ່ນ;

3. ຮັບຜິດຊອບບົນພື້ນຖານ ລັດຖະທຳມະນູນ ແລະ ກົດໝາຍ.

## ພາກທີ II
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ

**ມາດຕາ 4 (ປັບປຸງ) ທີ່ຕັ້ງ**

ອົງການປົກຄອງທ້ອງຖິ່ນ ແມ່ນ ອົງການບໍລິຫານຂັ້ນທ້ອງຖິ່ນ, ເປັນຕົວແທນຂອງລັດຖະບານ, ມີຄວາມຮັບຜິດຊອບຕໍ່ ລັດຖະບານ ແລະ ສະພາປະຊາຊົນທ້ອງຖິ່ນ.

ອົງການປົກຄອງທ້ອງຖິ່ນ ປະກອບດ້ວຍ:

1. ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;
2. ຄະນະກຳມະການປົກຄອງ ເມືອງ, ນະຄອນ;
3. ຄະນະກຳມະການປົກຄອງຕາແສງ.

**ມາດຕາ 5 ພາລະບົດບາດ**

ອົງການປົກຄອງທ້ອງຖິ່ນ ມີພາລະບົດບາດຄຸ້ມຄອງບໍລິຫານລັດ ທາງດ້ານ ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການສ້າງ ແລະ ນຳໃຊ້ຊັບພະຍາກອນມະນຸດ, ການນຳໃຊ້ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ; ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນທ້ອງຖິ່ນ ແລະ ວຽກງານການຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 6 (ປັບປຸງ) ສິດ ແລະ ໜ້າທີ່**

ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິສະພາປະຊາຊົນທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ;

2. ຄົ້ນຄວ້າ ແລະ ສະເໜີ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນ ຕໍ່ສະພາປະຊາຊົນທ້ອງຖິ່ນ ເພື່ອພິຈາລະນາ;

3. ໂຄສະນາ ເຜີຍແຜ່ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິສະພາປະຊາຊົນທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ;

4. ຄຸ້ມຄອງບໍລິຫານລັດ ທາງດ້ານ ການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ;

5. ອອກ ມະຕິ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການຄຸ້ມຄອງ ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

6. ຕິດຕາມ ກວດກາ ການປະຕິບັດໜ້າທີ່ຂອງອົງການຈັດຕັ້ງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

7. ຄຸ້ມຄອງ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວ ຢູ່ທ້ອງຖິ່ນຂອງຕົນ;

8. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງປະຊາຊົນ;

9. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວ ວຽກງານຮອບດ້ານຂອງທ້ອງຖິ່ນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ
### ໝວດທີ 1
### ນະຄອນຫຼວງ, ແຂວງ ແລະ ການສ້າງຕັ້ງ ນະຄອນຫຼວງ, ແຂວງ

**ມາດຕາ 7 (ປັບປຸງ) ນະຄອນຫຼວງ, ແຂວງ**

ນະຄອນຫຼວງ, ແຂວງ ແມ່ນ ເຂດການປົກຄອງທ້ອງຖິ່ນ ຊຶ່ງປະກອບດ້ວຍ ຫຼາຍ ເມືອງ, ນະຄອນ.

**ມາດຕາ 8 (ປັບປຸງ) ການສ້າງຕັ້ງ ນະຄອນຫຼວງ, ແຂວງ**

ນະຄອນຫຼວງ, ແຂວງ ຖືກສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ກຳນົດເຂດແດນ ໂດຍການຕົກລົງຂອງ ສະພາແຫ່ງຊາດ ຕາມການສະເໜີຂອງລັດຖະບານ.

**ມາດຕາ 9 (ປັບປຸງ) ເງື່ອນໄຂການສ້າງຕັ້ງ ນະຄອນຫຼວງ, ແຂວງ**

ການສ້າງຕັ້ງ ນະຄອນຫຼວງ, ແຂວງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທີ່ຕັ້ງດ້ານພູມສາດເໝາະສົມແກ່ການປົກຄອງ, ເປັນທີ່ຕັ້ງຍຸດທະສາດ ໃນການປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ;

2. ມີປັດໄຈພື້ນຖານສຳລັບການພັດທະນາເສດຖະກິດ-ສັງຄົມ;

3. ມີໂຄງລ່າງພື້ນຖານທີ່ຂະຫຍາຍຕົວ ເຊັ່ນ ຖະໜົນຫົນທາງ, ໂທລະຄົມມະນາຄົມ, ຕະຫຼາດ, ໄຟຟ້າ, ນ້ຳປະປາ, ໂຮງຮຽນ, ໂຮງໝໍ ແລະ ອື່ນໆ;

4. ມີພົນລະເມືອງ ທີ່ດຳລົງຊີວິດຢູ່ໃນທ້ອງຖິ່ນນັ້ນ ຢ່າງໜ້ອຍ ໜຶ່ງຮ້ອຍຊາວພັນຄົນ;

5. ມີ ສີ່ ຫົວໜ່ວຍການປົກຄອງຂັ້ນເມືອງຂຶ້ນໄປ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່
## ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ

**ມາດຕາ 10 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ແມ່ນ ອົງການບໍລິຫານຂັ້ນແຂວງ ຊຶ່ງມີພາລະບົດບາດ ຄຸ້ມຄອງບໍລິຫານລັດ ທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ; ສ້າງ ແລະ ນຳໃຊ້ຊັບ ພະຍາກອນມະນຸດ, ປົກປັກຮັກສາ ແລະ ນຳໃຊ້ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ ໃນທ້ອງຖິ່ນ; ຊີ້ນຳ, ກວດກາ ການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາ ເມືອງ, ນະຄອນ ໃນຂອບເຂດການຄຸ້ມຄອງຂອງຕົນ, ປະຕິບັດມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ.

**ມາດຕາ 11 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

2. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງທ້ອງຖິ່ນ ແລະ ແຜນການສ້າງ ແລະ ປັບປຸງນິຕິກຳ ຂັ້ນແຂວງ;

3. ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ອື່ນ ໃນສັງຄົມ;

4. ຊີ້ນຳ, ຊຸກຍູ້, ປຸກລະດົມ ແລະ ອຳນວຍຄວາມສະດວກ ກ່ຽວກັບວຽກງານເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

5. ຊຸກຍູ້, ລະດົມ ແຫຼ່ງທຶນ ເຂົ້າໃສ່ການປະຕິບັດຍຸດທະສາດປະຕິຮູບລະບົບ ການສຶກສາແຫ່ງຊາດ ແລະ ສາທາລະນະສຸກ ຢູ່ທ້ອງຖິ່ນ;

6. ປົກປັກຮັກສາ, ສົ່ງເສີມວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ ແລະ ຂອງຊົນເຜົ່າ; ຄຸ້ມຄອງ ແລະ ພັດທະນາ ສະຖານທີ່ທ່ອງທ່ຽວທາງດ້ານ ປະຫວັດສາດ, ວັດທະນະທຳ, ທຳມະຊາດ ແລະ ກະສິກຳ ພາຍໃນນະຄອນຫຼວງ, ແຂວງ;

7. ນຳໃຊ້ ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການຄຸ້ມຄອງບໍລິຫານລັດ; ປັບປຸງລະບຽບການ, ກົນໄກການບໍລິຫານ ແລະ ການບໍລິການຂອງລັດ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ;

8. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳ ຂອງທຸກຂະແໜງການຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາ ໂຈະ ຫຼື ຍົກເລີກ ນິຕິກຳຂອງຂະແໜງການທີ່ຂັດກັບກົດໝາຍ;

9. ປະເມີນຜົນການຈັດຕັ້ງປະຕິບັດ ນິຕິກຳທີ່ມີຜົນບັງຄັບທົ່ວໄປ ຂັ້ນຂອງຕົນ;

10. ແບ່ງໜ້າທີ່ຮັບຜິດຊອບ, ສິດຕັດສິນບັນຫາ ແລະ ຜົນປະໂຫຍດແກ່ ເມືອງ, ນະຄອນ ໃຫ້ຈະແຈ້ງ ແລະ ຂາດຕົວ;

11. ຈັດຕັ້ງ, ອຳນວຍ, ຄວບຄຸມ ແລະ ຕິດຕາມ ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ຂອງ ພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ, ການເຄື່ອນໄຫວປະຕິບັດໜ້າທີ່ຂອງ ເມືອງ, ນະຄອນ ແລະ ຫົວໜ່ວຍການຈັດຕັ້ງອື່ນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

12. ອຳນວຍຄວາມສະດວກ ແລະ ຕິດຕາມ ກວດກາ ການປະຕິບັດທຶນຊ່ວຍເຫຼືອ ແລະ ໂຄງການລົງທຶນທີ່ສູນກາງຄຸ້ມຄອງ; ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

13. ຊີ້ນຳ ກວດກາ ການຄຸ້ມຄອງ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ; ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

14. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີຂອງ ການຈັດຕັ້ງ ແລະ ບຸກຄົນ ກ່ຽວກັບການກະທຳຂອງ ພະນັກງານ-ລັດຖະກອນ ແລະ ອົງການບໍລິຫານ ໃນທ້ອງຖິ່ນຂອງຕົນ;

15. ຄົ້ນຄວ້າໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນຂອງ ນະຄອນຫຼວງ, ແຂວງ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ກຳນົດເຂດແດນຂອງ ເມືອງ, ນະຄອນ, ຕາແສງ;

16. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມໃນການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ ຢູ່ໃນທ້ອງຖິ່ນຂອງຕົນ;

17. ຄຸ້ມຄອງ ການຈັດຕັ້ງ, ພະນັກງານ-ລັດຖະກອນ; ຕິດຕາມກວດກາການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ພະແນກສາຍຕັ້ງ ທີ່ປະຈຳຢູ່ທ້ອງຖິ່ນຂອງຕົນ ໃຫ້ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ;

18. ສ້າງ, ບຳລຸງ, ຍົກລະດັບ ຄວາມຮູ້, ຄວາມສາມາດ ທາງດ້ານ ການເມືອງ, ການປົກຄອງ, ວິຊາສະເພາະ ແລະ ພາສາຕ່າງປະເທດ ໃຫ້ພະນັກງານ-ລັດຖະກອນຂອງຕົນ;

19. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາ ຊັບພະຍາກອນທຳມະຊາດ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ ແລະ ຈັດເກັບລາຍຮັບໃຫ້ຖືກຕ້ອງ;

20. ອຳນວຍ, ຄວບຄຸມ ອົງການລັດທີ່ກ່ຽວຂ້ອງ ປະຕິບັດການສ້າງລາຍຮັບໃຫ້ ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ; ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ-ລາຍຈ່າຍ ຂອງທ້ອງຖິ່ນ;

21. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງປະຊາຊົນ;

22. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

23. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງທ້ອງຖິ່ນ ຕໍ່ ລັດຖະບານ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

24. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ

### ມາດຕາ 12 (ປັບປຸງ) ໂຄງປະກອບກົງຈັກ

ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ມີ ໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການ ນະຄອນຫຼວງ, ແຂວງ;
2. ພະແນກ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ.

ໂຄງປະກອບກົງຈັກ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ໃຫ້ສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ ໃນແຕ່ລະໄລຍະ ໂດຍການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

### ມາດຕາ 13 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງວ່າການ ນະຄອນຫຼວງ, ແຂວງ

ຫ້ອງວ່າການ ນະຄອນຫຼວງ, ແຂວງ ແມ່ນ ໂຄງປະກອບກົງຈັກໜຶ່ງຂອງຄະນະກຳມະການປົກຄອງຂັ້ນແຂວງ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ໃນການອຳນວຍຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງ ນະຄອນຫຼວງ, ແຂວງ, ສ້າງແຜນການ, ໂຄງການດຳເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານໃຫ້ແກ່ການນຳຂອງ ນະຄອນຫຼວງ, ແຂວງ ແລະ ການຄຸ້ມຄອງບໍລິຫານວຽກງານພາຍໃນຂອງຕົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການ ນະຄອນຫຼວງ, ແຂວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 14 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງພະແນກ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ

ພະແນກ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ ແມ່ນໂຄງປະກອບກົງຈັກໜຶ່ງ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ກະຊວງ, ອົງການລັດທຽບເທົ່າກະຊວງ ທາງດ້ານວິຊາການ ແລະ ຄຸ້ມຄອງບໍລິຫານລັດ ຕາມການແບ່ງຂັ້ນຄຸ້ມຄອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 15 (ປັບປຸງ) ໂຄງປະກອບບຸກຄະລາກອນ

ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;
2. ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;
3. ກຳມະການ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ທີ່ເປັນຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ ແລະ ຫົວໜ້າອົງການລັດທຽບເທົ່າພະແນກ ຂັ້ນແຂວງ.

**ມາດຕາ 16 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ.

**ມາດຕາ 17 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງ ກອງປະຊຸມສະພາປະຊາຊົນ ຫຼື ຄະນະປະຈຳສະພາປະຊາຊົນ ຂັ້ນແຂວງ ຮັບຮອງເອົາ.

**ມາດຕາ 18 (ປັບປຸງ) ອາຍຸການ ຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ມີອາຍຸການ ສະໄໝລະ ຫ້າປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າໄດ້ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ໃນກໍລະນີ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຫາກໝົດອາຍຸການແລ້ວ ແຕ່ນາຍົກລັດຖະມົນຕີ ຍັງບໍ່ທັນໄດ້ແຕ່ງຕັ້ງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຜູ້ໃໝ່ນັ້ນ ໃຫ້ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຜູ້ເກົ່າສືບຕໍ່ປະຕິບັດໜ້າທີ່ຂອງຕົນ ຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຜູ້ໃໝ່ຕ້ອງດຳເນີນໃຫ້ສຳເລັດ ພາຍໃນເວລາ ເກົ້າສິບວັນ ຫຼັງຈາກອາຍຸການຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຜູ້ເກົ່າສິ້ນສຸດລົງ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ

**ມາດຕາ 19 (ປັບປຸງ) ພາລະບົດບາດ ຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ເປັນຫົວໜ້າຄະນະກຳມະການປົກຄອງ ຂັ້ນແຂວງ, ເປັນຕົວແທນ ແລະ ຮັບຜິດຊອບ ຕໍ່ ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ, ຊີ້ນຳຄະນະກຳມະການປົກຄອງຂັ້ນແຂວງ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ແລະ ມາດຕາ 11 ຂອງກົດໝາຍສະບັບນີ້.

**ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;
2. ຊີ້ນຳ, ອຳນວຍ, ຄວບຄຸມ ວຽກງານຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກວດກາການປະຕິບັດ ມະຕິສະພາປະຊາຊົນຂັ້ນແຂວງ, ມະຕິກອງປະຊຸມຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ແລະ ການເຄື່ອນໄຫວຂອງ ຫ້ອງວ່າການ, ພະແນກ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ, ຂັ້ນເມືອງ ທີ່ຂຶ້ນກັບຕົນ;

3. ສະເໜີຮ່າງ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງ ນະຄອນຫຼວງ, ແຂວງ ແລະ ແຜນການສ້າງ ແລະ ປັບປຸງນິຕິກຳຂັ້ນແຂວງ ຕໍ່ສະພາປະຊາຊົນຂັ້ນແຂວງ;

4. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາໂຄງປະກອບກົງຈັກຂອງ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

5. ສະເໜີການແຕ່ງຕັ້ງ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ແລະ ກຳມະການ ຄະນະກຳມະການປົກຄອງຂັ້ນແຂວງ ຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ເພື່ອພິຈາລະນາ, ຮັບຮອງເອົາ;

6. ສະເໜີການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ ຂັ້ນແຂວງ ເປັນລາຍບຸກຄົນ ຕໍ່ສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ;

7. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ ຂັ້ນແຂວງ ພາຍຫຼັງ ສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ;

8. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາ ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ພະແນກ, ອົງການລັດທຽບເທົ່າພະແນກ ຂັ້ນແຂວງ;

9. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາ ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ການກຳນົດ ເຂດແດນ ເມືອງ, ນະຄອນ ກ່ອນນຳສະເໜີລັດຖະບານ ພິຈາລະນາຕົກລົງ;

10. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງເອົາ ໂຄງປະກອບກົງຈັກ ຂອງຄະນະ ກຳມະການປົກຄອງ ເມືອງ, ນະຄອນ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ, ການກຳນົດເຂດແດນ ແລະ ການປ່ຽນຊື່ ຕາແສງ;

11. ຕົກລົງ ສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ, ການກຳນົດເຂດແດນ ແລະ ການປ່ຽນຊື່ ຕາແສງ ພາຍຫຼັງ ສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ;

12. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ;

13. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ ພາຍຫຼັງສະພາ ປະຊາຊົນຂັ້ນແຂວງ ຮັບຮອງເອົາ;

14. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ ຕາມການສະເໜີຂອງ ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ;

15. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າຫ້ອງວ່າການ, ຮອງຫົວໜ້າພະແນກ, ຮອງຫົວໜ້າ ອົງການລັດທຽບເທົ່າພະແນກ ຂັ້ນແຂວງ ຕາມການສະເໜີຂອງຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ, ຫົວໜ້າ ອົງການລັດທຽບເທົ່າພະແນກ ຂັ້ນແຂວງ; ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ດຳລົງຕຳແໜ່ງບໍລິຫານອື່ນ;

16. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳ ຂອງທຸກຂະແໜງການ ຢູ່ໃນຂັ້ນຂອງຕົນ ຫຼື ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຂໍ້ຕົກລົງກ່ຽວກັບການດຳເນີນຄະດີ ຂອງອົງການ ໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ;

17. ສະເໜີຂັ້ນເທິງພິຈາລະນາ ໂຈະ ຫຼື ຍົກເລີກ ນິຕິກຳຂອງຂະແໜງການທີ່ຂັດກັບກົດໝາຍ;

18. ສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາ, ຮັບຮອງເອົາ ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ຕາແສງ ແລະ ການກຳນົດເຂດແດນຂອງຕາແສງ;

19. ຕົກລົງ ສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ, ກຳນົດເຂດແດນບ້ານ ແລະ ການປ່ຽນຊື່ ບ້ານ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ;

20. ມີຄຳເຫັນຕໍ່ການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງ ຕາແສງ;

21. ສັ່ງຈ່າຍງົບປະມານຂອງ ນະຄອນຫຼວງ, ແຂວງ ຕາມແຜນງົບປະມານທີ່ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ;

22. ເຂົ້າຮ່ວມກອງປະຊຸມເປີດກວ້າງຂອງລັດຖະບານ ຕາມການເຊີນ;

23. ຮັບຜິດຊອບຕໍ່ ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ ກ່ຽວກັບຜົນສຳເລັດ, ຄວາມບົກພ່ອງໃນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

24. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງ ນະຄອນຫຼວງ, ແຂວງ ຕໍ່ ລັດຖະບານ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

25. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ**

ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຊ່ວຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ໃນການຊີ້ນຳວຽກງານ ຂອງຄະນະກຳມະການປົກຄອງຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ.

ໃນກໍລະນີ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນໃດໜຶ່ງ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຜູ້ໄດ້ຮັບມອບໝາຍເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ

**ມາດຕາ 22 (ປັບປຸງ) ກອງປະຊຸມ**

ກອງປະຊຸມຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ເປີດຂຶ້ນເດືອນລະເທື່ອ ໂດຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ປະກອບດ້ວຍ ຮອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຫົວໜ້າຫ້ອງວ່າການ, ຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກ ຂັ້ນແຂວງ. ນອກຈາກນີ້ຖ້າຫາກມີຄວາມຈຳເປັນອາດເຊີນ ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ ແລະ ຜູ້ຕາງໜ້າຈາກພາກສ່ວນອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມນຳກໍໄດ້.

ໃນກໍລະນີ ມີຄວາມຈຳເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສຳຄັນນັ້ນ ຕ້ອງເຮັດມະຕິກອງປະຊຸມ.

**ມາດຕາ 23 (ປັບປຸງ) ເນື້ອໃນທີ່ຕ້ອງນຳເຂົ້າກອງປະຊຸມ**

ເນື້ອໃນທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ມີ ດັ່ງນີ້:

1. ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານ ປະຈຳປີຂອງທ້ອງຖິ່ນ;
2. ການກຳນົດເຂດແດນ ແລະ ໂຄງປະກອບການຈັດຕັ້ງຂອງ ນະຄອນຫຼວງ, ແຂວງ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ການກຳນົດເຂດແດນຂອງ ເມືອງ, ນະຄອນ, ຕາແສງ;
3. ຮ່າງນິຕິກຳຕ່າງໆ;
4. ໂຄງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດ;
6. ວຽກງານ ນະໂຍບາຍ ແລະ ພະນັກງານ;
7. ບົດລາຍງານຮອບດ້ານຕໍ່ ລັດຖະບານ ແລະ ສະພາປະຊາຊົນຂັ້ນແຂວງ;
8. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

## ພາກທີ IV
## ເມືອງ ແລະ ຄະນະກຳມະການປົກຄອງເມືອງ
### ໝວດທີ 1
### ເມືອງ ແລະ ການສ້າງຕັ້ງເມືອງ

**ມາດຕາ 24 (ປັບປຸງ) ເມືອງ**

ເມືອງ ແມ່ນ ເຂດການປົກຄອງທ້ອງຖິ່ນ ກວມເອົາທັງພື້ນທີ່ຕົວເມືອງ ແລະ ຊົນນະບົດ ຊຶ່ງປະກອບດ້ວຍຫຼາຍຕາແສງ.

**ມາດຕາ 25 (ປັບປຸງ) ການສ້າງຕັ້ງເມືອງ**

ເມືອງ ຖືກ ສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ກຳນົດເຂດແດນ ໂດຍການຕົກລົງຂອງລັດຖະບານ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນຮັບຮອງເອົາ.

ຂັ້ນຕອນ ແລະ ວິທີການຄົ້ນຄວ້າ ເພື່ອສ້າງຕັ້ງເມືອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 26 (ປັບປຸງ) ເງື່ອນໄຂການສ້າງຕັ້ງເມືອງ**

ການສ້າງຕັ້ງເມືອງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທີ່ຕັ້ງທາງດ້ານພູມສາດທີ່ເໝາະສົມແກ່ການປົກຄອງ;

2. ມີພົນລະເມືອງ ຢ່າງໜ້ອຍ ສາມສິບພັນຄົນ ສໍາລັບເມືອງຢູ່ເຂດທົ່ງພຽງ ແລະ ຊາວພັນຄົນ ສໍາລັບເມືອງຢູ່ເຂດພູດອຍ;

3. ມີຢ່າງໜ້ອຍ ສອງຕາແສງ ຂຶ້ນໄປ;

4. ມີໂຄງລ່າງພື້ນຖານ ແລະ ມີປັດໄຈພື້ນຖານ ໃນການພັດທະນາເສດຖະກິດ-ສັງຄົມ.

ໃນກໍລະນີບໍ່ຄົບເງື່ອນໄຂໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້ ແຕ່ມີຄວາມຈໍາເປັນສ້າງຕັ້ງເມືອງ ລັດຖະບານ ເປັນຜູ້ພິຈາລະນາຕົກລົງ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກໍາມະການປົກຄອງເມືອງ

**ມາດຕາ 27 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະກໍາມະການປົກຄອງເມືອງ**

ຄະນະກໍາມະການປົກຄອງເມືອງ ແມ່ນ ອົງການບໍລິຫານຂັ້ນເມືອງ ຊຶ່ງມີພາລະບົດບາດຄຸ້ມຄອງບໍລິຫານລັດທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສ້າງ ແລະ ນໍາໃຊ້ ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນໍາໃຊ້ ຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ ໃນທ້ອງຖິ່ນຂອງຕົນ; ຊີ້ນໍາ, ກວດກາ ການຈັດຕັ້ງປະຕິບັດແຜນພັດທະນາຕາແສງ ໃນຂອບເຂດການຄຸ້ມຄອງຂອງຕົນ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກໍາມະການປົກຄອງເມືອງ**

ຄະນະກໍາມະການປົກຄອງເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ຂອງຂັ້ນເທິງ;

2. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ຂອງເມືອງ;

3. ຈັດຕັ້ງປະຕິບັດວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ ໃນສັງຄົມ;

4. ຊີ້ນໍາ, ຊຸກຍູ້, ປຸກລະດົມ ແລະ ອໍານວຍຄວາມສະດວກ ກ່ຽວກັບວຽກງານເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ;

5. ຈັດຕັ້ງ, ອໍານວຍ, ຄວບຄຸມ ແລະ ຕິດຕາມ ກວດກາການເຄື່ອນໄຫວປະຕິບັດໜ້າທີ່ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ແລະ ຄະນະກໍາມະການປົກຄອງຕາແສງ;

6. ສ້າງຕັ້ງ ແລະ ຄຸ້ມຄອງໜ່ວຍງານບໍລິການຂອງລັດ, ຈັດຕັ້ງຄຸ້ມຄອງບໍລິຫານຕົວເມືອງ ແລະ ພື້ນທີ່ທີ່ມີລັກສະນະເປັນຕົວເມືອງ ໃຫ້ມີການພັດທະນາດ້ານໂຄງລ່າງພື້ນຖານ, ການບໍລິການສາທາລະນະທີ່ຈໍາເປັນ, ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ສວຍງາມ;

7. ໂຄສະນາ ເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານສຸຂານາໄມແກ່ປະຊາຊົນ, ສົ່ງເສີມດ້ານສາທາລະນະສຸກ, ພັດທະນາການສຶກສາ, ກິລາ-ກາຍຍະກໍາ ແລະ ສິດສະເໝີພາບ ລະຫວ່າງ ຍິງ-ຊາຍ;

8. ປົກປັກຮັກສາ, ສົ່ງເສີມ ວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ ແລະ ຊົນເຜົ່າ; ສົ່ງເສີມການພັດທະນາສີມືແຮງງານ ແລະ ຄຸ້ມຄອງແຮງງານຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;

9. ອຳນວຍຄວາມສະດວກ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນທີ່ ສູນກາງ ແລະ ນະຄອນຫຼວງ, ແຂວງ ຄຸ້ມຄອງ; ສົ່ງເສີມການລົງທຶນຂອງເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ;

10. ເສີມຂະຫຍາຍຄວາມສາມັກຄີຂອງ ປະຊາຊົນລາວບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ; ຄຸ້ມຄອງພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ;

11. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີຂອງ ການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທຳຂອງ ພະນັກງານ-ລັດຖະກອນ ແລະ ອົງການບໍລິຫານ ໃນທ້ອງຖິ່ນຂອງຕົນ;

12. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ, ຈັດເກັບລາຍຮັບໃຫ້ຖືກຕ້ອງ; ຄຸ້ມຄອງຫົວໜ່ວຍທຸລະກິດ, ອຸດສາຫະກຳ, ການຄ້າ, ການບໍລິການ ແລະ ອື່ນໆ;

13. ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ-ລາຍຈ່າຍຂອງທ້ອງຖິ່ນ; ອຳນວຍ, ຄວບຄຸມ ໃຫ້ອົງການທີ່ກ່ຽວຂ້ອງປະຕິບັດການສ້າງລາຍຮັບໃຫ້ ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ;

14. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກ ນິຕິກຳ ຂອງ ເມືອງ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງເມືອງ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກ ນິຕິກຳ ຂອງຂະແໜງການທີ່ຂັດກັບກົດໝາຍ;

15. ປະເມີນຜົນການຈັດຕັ້ງປະຕິບັດ ນິຕິກຳທີ່ມີຜົນບັງຄັບທົ່ວໄປ ຂັ້ນຂອງຕົນ;

16. ຄົ້ນຄວ້າ, ສະເໜີ ໂຄງປະກອບການຈັດຕັ້ງ ຂອງ ເມືອງ, ຕາແສງ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ, ກຳນົດເຂດແດນຂອງ ຕາແສງ, ບ້ານ ແລະ ການປ່ຽນຊື່ ຕາແສງ, ບ້ານ ຕໍ່ປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ;

17. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າເຂົ້າຮ່ວມການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ຢູ່ໃນເມືອງຂອງຕົນ;

18. ຄຸ້ມຄອງການຈັດຕັ້ງ, ພະນັກງານ-ລັດຖະກອນຂອງຕົນ; ຕິດຕາມ ກວດກາ ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນຂອງຕົນ ແລະ ຫ້ອງການສາຍຕັ້ງປະຈຳເມືອງ, ອົງການກ່ຽວຂ້ອງ ແລະ ພະນັກງານ-ລັດຖະກອນ ຂອງຕາແສງ;

19. ສ້າງ, ບຳລຸງ ຍົກລະດັບຄວາມຮູ້, ຄວາມສາມາດ ທາງດ້ານ ການເມືອງ, ການປົກຄອງ, ວິຊາສະເພາະໃຫ້ພະນັກງານ-ລັດຖະກອນຂອງຕົນ ແລະ ບຸກຄະລາກອນຂອງ ຕາແສງ;

20. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງປະຊາຊົນ;

21. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

22. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງເມືອງ ຕໍ່ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

23. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ຂອງຄະນະກຳມະການປົກຄອງເມືອງ

**ມາດຕາ 29 (ປັບປຸງ) ໂຄງປະກອບກົງຈັກ**

ຄະນະກຳມະການປົກຄອງ ເມືອງ ມີ ໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການເມືອງ;

2. ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງເມືອງ ຊຶ່ງສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ ໂດຍການຮັບຮອງຂອງສະພາປະຊາຊົນທ້ອງຖິ່ນ.

**ມາດຕາ 30 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຫ້ອງວ່າການເມືອງ**

ຫ້ອງວ່າການເມືອງ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງຄະນະກຳມະການປົກຄອງເມືອງ ຊຶ່ງມີພາລະບົດບາດ ເປັນເສນາທິການໃຫ້ປະທານຄະນະກຳມະການປົກຄອງເມືອງ ໃນການອຳນວຍ, ຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານ ວຽກງານຂອງເມືອງ, ສ້າງແຜນການ, ໂຄງການດຳເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ ການເຄື່ອນໄຫວວຽກງານໃຫ້ແກ່ການນຳຂອງເມືອງ ແລະການຄຸ້ມຄອງບໍລິຫານວຽກງານ ພາຍໃນຂອງຕົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການເມືອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງ ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ**

ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງເມືອງ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງຄະນະກຳມະການປົກຄອງເມືອງ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ ຄະນະກຳມະການປົກຄອງເມືອງ, ພະແນກຂັ້ນແຂວງ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ທາງດ້ານວິຊາການ ແລະ ຄຸ້ມຄອງບໍລິຫານລັດ ຕາມການແບ່ງຂັ້ນຄຸ້ມຄອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 32 (ປັບປຸງ) ໂຄງປະກອບບຸກຄະລາກອນ**

ຄະນະກຳມະການປົກຄອງເມືອງ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ປະທານຄະນະກຳມະການປົກຄອງເມືອງ;

2. ຮອງປະທານຄະນະກຳມະການປົກຄອງເມືອງ;

3. ກຳມະການ ຄະນະກຳມະການປົກຄອງເມືອງ ທີ່ເປັນຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ຂອງເມືອງ.

**ມາດຕາ 33 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງເມືອງ**

ປະທານຄະນະກຳມະການປົກຄອງເມືອງ ຖືກ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນ ຮັບຮອງເອົາ.

**ມາດຕາ 34 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງເມືອງ**

ຮອງປະທານຄະນະກຳມະການປົກຄອງເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງເມືອງ.

**ມາດຕາ 35 (ປັບປຸງ) ອາຍຸການ ຂອງປະທານຄະນະກຳມະການປົກຄອງເມືອງ**

ປະທານຄະນະກຳມະການປົກຄອງເມືອງ ມີອາຍຸການ ສະໄໝລະ ຫ້າປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າໄດ້ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ໃນກໍລະນີ ປະທານຄະນະກຳມະການປົກຄອງເມືອງ ຫາກໝົດອາຍຸການແລ້ວ ແຕ່ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຍັງບໍ່ທັນໄດ້ແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງຜູ້ໃໝ່ນັ້ນ ໃຫ້ປະທານຄະນະກຳມະການປົກຄອງເມືອງຜູ້ເກົ່າ ສືບຕໍ່ປະຕິບັດໜ້າທີ່ ຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງຜູ້ໃໝ່ ຕ້ອງດຳເນີນໃຫ້ສຳເລັດ ພາຍໃນເວລາເກົ້າສິບວັນ ຫຼັງຈາກອາຍຸການ ຂອງປະທານຄະນະກຳມະການປົກຄອງເມືອງ ຜູ້ເກົ່າສິ້ນສຸດລົງ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງປະທານຄະນະກຳມະການປົກຄອງເມືອງ

**ມາດຕາ 36 (ປັບປຸງ) ພາລະບົດບາດ ຂອງປະທານຄະນະກຳມະການປົກຄອງເມືອງ**

ປະທານຄະນະກຳມະການປົກຄອງເມືອງ ເປັນຫົວໜ້າຄະນະກຳມະການປົກຄອງເມືອງ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຊີ້ນຳຄະນະກຳມະການປົກຄອງເມືອງ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 27 ແລະ ມາດຕາ 28 ຂອງກົດໝາຍສະບັບນີ້.

**ມາດຕາ 37 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປະທານຄະນະກຳມະການປົກຄອງເມືອງ**

ປະທານຄະນະກຳມະການປົກຄອງເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມຄະນະກຳມະການປົກຄອງເມືອງ;

2. ຊີ້ນຳ, ອຳນວຍ, ຄວບຄຸມ, ວຽກງານຂອງຄະນະກຳມະການປົກຄອງເມືອງ; ກວດກາການປະຕິບັດມະຕິກອງປະຊຸມສະພາປະຊາຊົນທ້ອງຖິ່ນ, ມະຕິກອງປະຊຸມຄະນະກຳມະການປົກຄອງເມືອງ ແລະ ການເຄື່ອນໄຫວຂອງຫ້ອງວ່າການ, ຫ້ອງການຂອງເມືອງ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ທີ່ຂຶ້ນກັບຕົນ;

3. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງເມືອງ ຕໍ່ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ມີຄຳເຫັນ;

4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ແລະ ຜູ້ດຳລົງຕຳແໜ່ງບໍລິຫານອື່ນ ຂອງເມືອງ ພາຍຫຼັງການປະກອບຄຳເຫັນຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ;

5. ສະເໜີປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກ່ຽວກັບການ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງເທດສະບານ ພາຍຫຼັງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ມີຄຳເຫັນ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງຕາແສງ ແລະ ຜູ້ດຳລົງຕຳແໜ່ງບໍລິຫານອື່ນຂອງຕາແສງ;

7. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກ ນິຕິກຳຂອງ ທຸກຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງເມືອງ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ;

8. ສະເໜີຂັ້ນເທິງພິຈາລະນາ ໂຈະ ຫຼື ຍົກເລີກ ນິຕິກຳ ຂອງຂະແໜງການ ທີ່ຂັດກັບກົດໝາຍ;

9. ສັ່ງຈ່າຍງົບປະມານ ຂອງ ເມືອງ ຕາມແຜນງົບປະມານທີ່ສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ;

10. ເຂົ້າຮ່ວມກອງປະຊຸມ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຕາມການເຊີນ;

11. ຮັບຜິດຊອບຕໍ່ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກ່ຽວກັບຜົນສຳເລັດ ແລະ ຄວາມບົກພ່ອງ ໃນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວ ວຽກງານຮອບດ້ານຂອງເມືອງ ຕໍ່ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຄະນະສະມາຊິກສະພາປະຊາຊົນ ຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 38 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະກຳມະການປົກຄອງເມືອງ**

ຮອງປະທານຄະນະກຳມະການປົກຄອງເມືອງ ຊ່ວຍວຽກປະທານຄະນະກຳມະການປົກຄອງເມືອງ ໃນການຊີ້ນຳວຽກງານຂອງຄະນະກຳມະການປົກຄອງເມືອງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານຄະນະກຳມະການປົກຄອງເມືອງ.

ໃນກໍລະນີ ປະທານຄະນະກຳມະການປົກຄອງເມືອງ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນໃດໜຶ່ງ ຮອງປະທານຄະນະກຳມະການປົກຄອງເມືອງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມຂອງຄະນະກຳມະການປົກຄອງເມືອງ

**ມາດຕາ 39 (ປັບປຸງ) ກອງປະຊຸມ**

ກອງປະຊຸມຂອງຄະນະກຳມະການປົກຄອງເມືອງ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນປະທານຄະນະກຳມະການປົກຄອງເມືອງ ເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມ ຂອງຄະນະກຳມະການປົກຄອງເມືອງ ປະກອບດ້ວຍ ຮອງປະທານຄະນະກຳມະການປົກຄອງເມືອງ, ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ຂອງເມືອງ ແລະ ປະທານຄະນະກຳມະການປົກຄອງຕາແສງ. ນອກຈາກນີ້ ຖ້າຫາກມີຄວາມຈຳເປັນ ອາດເຊີນຜູ້ຕາງໜ້າ ຈາກພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີມີຄວາມຈຳເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງ ຂອງປະທານຄະນະກຳມະການປົກຄອງເມືອງ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສຳຄັນນັ້ນ ຕ້ອງເຮັດມະຕິກອງປະຊຸມ.

**ມາດຕາ 40 (ປັບປຸງ) ເນື້ອໃນທີ່ຕ້ອງນຳເຂົ້າກອງປະຊຸມ**

ເນື້ອໃນທີ່ຕ້ອງນຳເຂົ້າ ພິຈາລະນາ ແລະ ຕົກລົງ ໃນກອງປະຊຸມຂອງຄະນະກຳມະການປົກຄອງເມືອງ ມີ ດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານ ປະຈຳປີ ຂອງເມືອງ;

2. ການກຳນົດເຂດແດນ ແລະ ໂຄງປະກອບການຈັດຕັ້ງ ຂອງເມືອງ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ, ການກຳນົດເຂດແດນ ແລະ ການປ່ຽນຊື່ ຕາແສງ, ບ້ານ;

3. ຮ່າງນິຕິກຳຕ່າງໆ;

4. ໂຄງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;

5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

6. ວຽກງານນະໂຍບາຍ ແລະ ພະນັກງານ;

7. ບົດລາຍງານຮອບດ້ານ ຕໍ່ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

8. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມ ສຳຄັນ ແລະ ຈຳເປັນ.

## ພາກທີ V

## ນະຄອນ ແລະ ຄະນະກຳມະການປົກຄອງນະຄອນ

### ໝວດທີ 1

### ນະຄອນ ແລະ ການສ້າງຕັ້ງນະຄອນ

**ມາດຕາ 41 (ປັບປຸງ) ນະຄອນ**

ນະຄອນ ແມ່ນ ເຂດການປົກຄອງຂັ້ນເມືອງ ທີ່ມີລະດັບການພັດທະນາສູງ, ກວມເອົາທັງພື້ນທີ່ຕົວເມືອງ ຊົນນະບົດ ແລະ ປະກອບດ້ວຍຫຼາຍຕາແສງ.

**ມາດຕາ 42 (ປັບປຸງ) ການສ້າງຕັ້ງນະຄອນ**

ນະຄອນ ຖືກ ສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ກຳນົດເຂດແດນ ໂດຍການຕົກລົງຂອງລັດຖະບານ ຕາມການສະເໜີຂອງ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນ ໄດ້ຮັບຮອງເອົາ.

ຂັ້ນຕອນ ແລະ ວິທີ ການຄົ້ນຄວ້າ ເພື່ອສ້າງຕັ້ງນະຄອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 43 (ປັບປຸງ) ເງື່ອນໄຂການສ້າງຕັ້ງນະຄອນ**

ໃນການສ້າງຕັ້ງນະຄອນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີພົນລະເມືອງແຕ່ ຫົກສິບພັນຄົນ ຂຶ້ນໄປ ແລະ ຢູ່ພາຍໃນພື້ນທີ່ຕົວເມືອງ ຕ້ອງມີ ຊາວຫ້າພັນຄົນ ຂຶ້ນໄປ;

2. ມີຄວາມໜາແໜ້ນຂອງພົນລະເມືອງ ພາຍໃນພື້ນທີ່ຕົວເມືອງ ແຕ່ ເກົ້າຮ້ອຍຄົນ ຂຶ້ນໄປ ຕໍ່ກິໂລ ຕາແມັດ ຊຶ່ງເປັນທີ່ຕັ້ງຂອງຄະນະກຳມະການປົກຄອງເມືອງ;

3. ມີຢ່າງໜ້ອຍ ສອງຕາແສງ ຂຶ້ນໄປ;

4. ມີຈຳນວນຜູ້ປະກອບອາຊີບກະສິກອນ ຢູ່ພາຍໃນພື້ນທີ່ຕົວເມືອງ ຊຶ່ງເປັນທີ່ຕັ້ງ ຂອງຄະນະກຳມະການ ປົກຄອງເມືອງ ບໍ່ເກີນ ຊາວຫ້າສ່ວນຮ້ອຍ ຂອງຈຳນວນພົນລະເມືອງທັງໝົດ ທີ່ຢູ່ພາຍໃນພື້ນທີ່ຕົວເມືອງດັ່ງກ່າວ;

5. ມີໂຄງລ່າງພື້ນຖານ ດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ໄດ້ຮັບການພັດທະນາໃນລະດັບສູງ ແລະ ເປັນລະບົບຄົບຊຸດ;

6. ເປັນບ້ານພັດທະນາທັງໝົດ;

7. ມີລາຍຮັບທີ່ສາມາດກຸ້ມຕົນເອງດ້ານລາຍຈ່າຍງົບປະມານບໍລິຫານປົກກະຕິ ແລະ ລາຍຈ່າຍການ ລົງທຶນ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງນະຄອນ

**ມາດຕາ 44 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະກຳມະການປົກຄອງນະຄອນ**

ຄະນະກຳມະການປົກຄອງນະຄອນ ແມ່ນ ອົງການບໍລິຫານຂັ້ນເມືອງ ຊຶ່ງມີພາລະບົດບາດຄຸ້ມຄອງບໍລິຫານລັດ ທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສ້າງ ແລະ ນຳໃຊ້ ຊັບພະຍາກອນມະນຸດ, ປົກປັກຮັກສາ ແລະ ນຳໃຊ້ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນ ໃນທ້ອງຖິ່ນຂອງຕົນ; ຊີ້ນຳ, ກວດກາ ການຈັດຕັ້ງປະຕິບັດແຜນພັດທະນາຕາແສງ, ຈັດຕັ້ງການບໍລິການສາທາລະນະ, ຮັບປະກັນ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ຄວາມສວຍງາມ ໃນຕົວເມືອງ ດ້ວຍເຕັກນິກ ແລະ ວິທີການທີ່ກ້າວໜ້າທັນສະໄໝ.

**ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງນະຄອນ**

ຄະນະກຳມະການປົກຄອງນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ຂອງຂັ້ນເທິງ;
2. ສ້າງ ແລະ ພັດທະນາ ນະຄອນ ໃຫ້ສີວິໄລ ແລະ ທັນສະໄໝ;
3. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ຂອງນະຄອນ;
4. ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ;
5. ຊີ້ນຳ, ຊຸກຍູ້, ປຸກລະດົມ ແລະ ອຳນວຍຄວາມສະດວກ ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ;
6. ຈັດຕັ້ງ, ອຳນວຍ, ຄວບຄຸມ ແລະ ຕິດຕາມ ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການນະຄອນ ແລະ ຄະນະກຳມະການປົກຄອງຕາແສງ;
7. ສ້າງຕັ້ງ ແລະ ຄຸ້ມຄອງໜ່ວຍງານບໍລິການຂອງລັດ, ຈັດຕັ້ງຄຸ້ມຄອງບໍລິຫານຕົວເມືອງ ໃຫ້ມີການພັດທະນາໂຄງລ່າງພື້ນຖານ, ການບໍລິການສາທາລະນະທີ່ຈຳເປັນ, ມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ ແລະ ຄວາມສວຍງາມ;
8. ໂຄສະນາ ເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານ ສຸຂານາໄມແກ່ປະຊາຊົນ, ສົ່ງເສີມດ້ານສາທາລະນະສຸກ, ພັດທະນາການສຶກສາ, ກິລາ-ກາຍຍະກຳ ແລະ ສິດສະເໝີພາບ ລະຫວ່າງ ຍິງ-ຊາຍ;
9. ປົກປັກຮັກສາ, ສົ່ງເສີມ ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ ແລະ ຊົນເຜົ່າ; ສົ່ງເສີມການພັດທະນາສີມືແຮງງານ ແລະ ຄຸ້ມຄອງແຮງງານຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;
10. ອຳນວຍຄວາມສະດວກ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການລົງທຶນທີ່ ສູນກາງ ແລະ ນະຄອນຫຼວງ, ແຂວງ ຄຸ້ມຄອງ; ສົ່ງເສີມການລົງທຶນ ຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ;
11. ເສີມຂະຫຍາຍຄວາມສາມັກຄີ ຂອງປະຊາຊົນລາວບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ, ຄຸ້ມຄອງພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ;
12. ພິຈາລະນາ, ໃຫ້ຄຳແນະນຳ ແລະ ແກ້ໄຂຄຳສະເໜີຂອງການຈັດຕັ້ງ ຫຼື ບຸກຄົນ ກ່ຽວກັບການກະທຳຂອງພະນັກງານ-ລັດຖະກອນ ແລະ ອົງການບໍລິຫານ ໃນທ້ອງຖິ່ນຂອງຕົນ;

13. ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ແລະ ພັດທະນາຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ, ຈັດເກັບລາຍຮັບໃຫ້ຖືກຕ້ອງ; ຄຸ້ມຄອງຫົວໜ່ວຍທຸລະກິດ, ອຸດສາຫະກຳ, ການຄ້າ, ການບໍລິການ ແລະ ອື່ນໆ;

14. ຄຸ້ມຄອງ ແລະ ປະຕິບັດແຜນລາຍຮັບ-ລາຍຈ່າຍ ຂອງນະຄອນ; ອຳນວຍ, ຄວບຄຸມ ໃຫ້ອົງການ ທີ່ກ່ຽວຂ້ອງ ປະຕິບັດການສ້າງລາຍຮັບໃຫ້ ຖືກຕ້ອງ, ຄົບຖ້ວນ, ທັນເວລາ ແລະ ໂປ່ງໃສ;

15. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳຂອງ ນະຄອນ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການຂອງນະຄອນ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ; ສະເໜີຂັ້ນເທິງ ພິຈາລະນາໂຈະ ຫຼື ຍົກເລີກນິຕິກຳຂອງຂະແໜງການ ທີ່ຂັດກັບກົດໝາຍ;

16. ຄົ້ນຄວ້າ, ສະເໜີ ໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນ ຂອງ ນະຄອນ, ຕາແສງ; ການສ້າງຕັ້ງ, ໂຮມເຂົ້າ, ຍຸບເລີກ, ກຳນົດເຂດແດນ ແລະ ການປ່ຽນຊື່ ຕາແສງ, ບ້ານ;

17. ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການ ຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມ ການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຕ້ານປາກົດການຫຍໍ້ທໍ້ໃນ ນະຄອນຂອງຕົນ;

18. ສ້າງຜັງເມືອງ, ຄຸ້ມຄອງການກໍ່ສ້າງ ແລະ ການພັດທະນາໃນພື້ນທີ່ຕົວເມືອງ, ປັບປຸງບູລະນະໂຄງລ່າງ ພື້ນຖານ, ຄຸ້ມຄອງ ວັດທະນະທຳ-ສັງຄົມ, ກິລາ-ກາຍຍະກຳ ແລະ ການບໍລິການຂອງຕົວເມືອງ ຊຶ່ງມີຖະໜົນຫົນທາງ, ໄຟຟ້າ, ນໍ້າປະປາ, ຮ່ອງລະບາຍນໍ້າ, ລະບົບບຳບັດນໍ້າເສຍ, ປ້ອງກັນຕາຝັ່ງເຈື່ອນ, ໂຮງຮຽນ, ໂຮງໝໍ, ຕະຫຼາດ, ຮ້ານກິນດື່ມ, ສະຖານບັນເທີງ, ລະບົບແສງສະຫວ່າງ, ສວນສາທາລະນະ, ປ້ອງກັນ ແລະ ແກ້ໄຂ ສາທາລະນະໄພ, ອະນາໄມ, ເກັບມ້ຽນ, ກຳຈັດ ຂີ້ເຫຍື້ອ ແລະ ອື່ນໆ;

19. ສ້າງຕັ້ງ ແລະ ຄຸ້ມຄອງການບໍລິການສາທາລະນະທີ່ຈຳເປັນ ເຊັ່ນ ການຂົນສົ່ງມວນຊົນ, ວິສະວະກຳ ການຈໍລະຈອນໃນທ້ອງຖະໜົນ, ການຄຸ້ມຄອງຈັດສັນ ຄິວລົດ, ບ່ອນຈອດລົດ ໃນສະຖານທີ່ສາທາລະນະ ແລະ ອື່ນໆ;

20. ຄຸ້ມຄອງ, ກວດກາກິດຈະການກໍ່ສ້າງ ໃຫ້ໄດ້ມາດຕະຖານ, ມີຄວາມປອດໄພ ແລະ ທົນທານ;

21. ປົກປັກຮັກສາ ແລະ ປັບປຸງສິ່ງແວດລ້ອມ ເຊັ່ນ ເຂດສະຫງວນ, ໜອງ, ບຶງ, ເຂດແຄມແມ່ນໍ້າ, ທິວທັດທຳມະຊາດ, ປ່າສະຫງວນ ແລະ ອື່ນໆ;

22. ຮັບປະກັນ ຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພໃນຊີວິດ ແລະ ຊັບສິນຂອງປະຊາຊົນ, ອະນຸລັກ ແລະ ຄຸ້ມຄອງ ອາຄານ, ສະຖານທີ່ ທີ່ມີເອກະລັກທາງ ສິລະປະ, ວັດທະນະທຳ, ສະຖາປັດຕະຍະກຳ ຂອງຊາດ, ທ້ອງຖິ່ນ ທີ່ມີຄຸນຄ່າທາງດ້ານປະຫວັດສາດ;

24. ຄຸ້ມຄອງ ການຈັດຕັ້ງ, ພະນັກງານ-ລັດຖະກອນ; ຕິດຕາມ ກວດກາ ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ຫ້ອງການສາຍຕັ້ງ ປະຈຳນະຄອນ, ອົງການກ່ຽວຂ້ອງ ແລະ ພະນັກງານ-ລັດຖະກອນ ຂອງຕາແສງ;

23. ສ້າງ, ບຳລຸງ ຍົກລະດັບ ຄວາມຮູ້, ຄວາມສາມາດ ທາງດ້ານ ການເມືອງ, ການປົກຄອງ, ວິຊາສະເພາະ ໃຫ້ພະນັກງານ-ລັດຖະກອນຂອງຕົນ ແລະ ບຸກຄະລາກອນຂອງຕາແສງ;

24. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງປະຊາຊົນ;

25. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

26. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງນະຄອນ ຕໍ່ ຄະນະກໍາມະການປົກຄອງ ນະຄອນຫຼວງ, ແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈໍາເຂດເລືອກຕັ້ງຂັ້ນເມືອງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

27. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ຂອງຄະນະກໍາມະການປົກຄອງນະຄອນ

### ມາດຕາ 46 (ປັບປຸງ) ໂຄງປະກອບກົງຈັກ

ຄະນະກໍາມະການປົກຄອງນະຄອນ ມີໂຄງປະກອບກົງຈັກ ດັ່ງນີ້:

1. ຫ້ອງວ່າການນະຄອນ;

2. ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ ຊຶ່ງສ້າງຕັ້ງຂຶ້ນຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ ໂດຍການຮັບຮອງຂອງສະພາປະຊາຊົນທ້ອງຖິ່ນ.

### ມາດຕາ 47 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຫ້ອງວ່າການນະຄອນ

ຫ້ອງວ່າການນະຄອນ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງຄະນະກໍາມະການປົກຄອງນະຄອນ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ ປະທານຄະນະກໍາມະການປົກຄອງນະຄອນ ໃນການ ອໍານວຍ, ຄວບຄຸມ, ຊຸກຍູ້, ຕິດຕາມການບໍລິຫານວຽກງານຂອງນະຄອນ, ສ້າງແຜນການ, ໂຄງການດໍາເນີນງານ, ຄົ້ນຄວ້າສັງລວມ, ຄຸ້ມຄອງເອກະສານ, ເປັນໃຈກາງພົວພັນປະສານງານ, ບໍລິຫານຮັບໃຊ້ການເຄື່ອນໄຫວວຽກງານໃຫ້ແກ່ການນໍາຂອງນະຄອນ ແລະ ຄຸ້ມຄອງບໍລິຫານວຽກງານ ພາຍໃນຂອງຕົນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການນະຄອນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 48 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ

ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ ແມ່ນ ໂຄງປະກອບກົງຈັກໜຶ່ງ ຂອງຄະນະກໍາມະການປົກຄອງນະຄອນ ຊຶ່ງມີພາລະບົດບາດເປັນເສນາທິການ ໃຫ້ຄະນະກໍາມະການປົກຄອງນະຄອນ, ພະແນກຂັ້ນແຂວງ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ທາງດ້ານວິຊາການ ແລະ ການຄຸ້ມຄອງບໍລິຫານລັດຕາມການແບ່ງຂັ້ນຄຸ້ມຄອງ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 49 (ປັບປຸງ) ໂຄງປະກອບບຸກຄະລາກອນ

ຄະນະກໍາມະການປົກຄອງນະຄອນ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ປະທານຄະນະກໍາມະການປົກຄອງນະຄອນ;

2. ຮອງປະທານຄະນະກໍາມະການປົກຄອງນະຄອນ;

3. ກໍາມະການ ຄະນະກໍາມະການປົກຄອງນະຄອນ ທີ່ເປັນຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ຂອງນະຄອນ.

**ມາດຕາ 50 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງນະຄອນ**

ປະທານຄະນະກຳມະການປົກຄອງນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນ ຮັບຮອງເອົາ.

**ມາດຕາ 51 (ປັບປຸງ) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງນະຄອນ**

ຮອງປະທານຄະນະກຳມະການປົກຄອງນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຕາມການສະເໜີ ຂອງປະທານຄະນະກຳມະການປົກຄອງນະຄອນ.

**ມາດຕາ 52 (ປັບປຸງ) ອາຍຸການ ຂອງປະທານຄະນະກຳມະການປົກຄອງນະຄອນ**

ປະທານຄະນະກຳມະການປົກຄອງນະຄອນ ມີອາຍຸການ ສະໄໝລະຫ້າປີ ແລະ ສາມາດດຳລົງຕຳແໜ່ງຢູ່ບ່ອນເກົ່າໄດ້ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ໃນກໍລະນີ ປະທານຄະນະກຳມະການປົກຄອງນະຄອນ ຫາກໝົດອາຍຸການແລ້ວ ແຕ່ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຍັງບໍ່ທັນໄດ້ແຕ່ງຕັ້ງ ປະທານຄະນະກຳມະການປົກຄອງນະຄອນຜູ້ໃໝ່ນັ້ນ ໃຫ້ປະທານຄະນະກຳມະການປົກຄອງນະຄອນຜູ້ເກົ່າ ສືບຕໍ່ປະຕິບັດໜ້າທີ່ຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງປະທານຄະນະກຳມະການປົກຄອງນະຄອນ ຕ້ອງດຳເນີນໃຫ້ສຳເລັດ ພາຍໃນເວລາ ເກົ້າສິບວັນ ຫຼັງຈາກອາຍຸການຂອງປະທານຄະນະກຳມະການປົກຄອງນະຄອນຜູ້ເກົ່າ ສິ້ນສຸດລົງ.

## ໝວດທີ 4

## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງປະທານຄະນະກຳມະການປົກຄອງນະຄອນ

**ມາດຕາ 53 (ປັບປຸງ) ພາລະບົດບາດ ຂອງປະທານຄະນະກຳມະການປົກຄອງນະຄອນ**

ປະທານຄະນະກຳມະການປົກຄອງນະຄອນ ເປັນຫົວໜ້າຄະນະກຳມະການປົກຄອງນະຄອນ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຊີ້ນຳຄະນະກຳມະການປົກຄອງນະຄອນປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ແລະ 45 ຂອງກົດໝາຍສະບັບນີ້.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປະທານຄະນະກຳມະການປົກຄອງນະຄອນ**

ປະທານຄະນະກຳມະການປົກຄອງນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານກອງປະຊຸມຄະນະກຳມະການປົກຄອງນະຄອນ;
2. ຊີ້ນຳ, ອຳນວຍ, ຄວບຄຸມ ວຽກງານຂອງຄະນະກຳມະການປົກຄອງນະຄອນ, ກວດກາການປະຕິບັດມະຕິກອງປະຊຸມສະພາປະຊາຊົນທ້ອງຖິ່ນ, ມະຕິກອງປະຊຸມຄະນະກຳມະການປົກຄອງນະຄອນ ແລະ ການເຄື່ອນໄຫວຂອງຫ້ອງວ່າການ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ ທີ່ຂຶ້ນກັບຕົນ;
3. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງນະຄອນ ຕໍ່ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ພາຍຫຼັງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ມີຄຳເຫັນ;
4. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າຫ້ອງວ່າການນະຄອນ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ແລະ ຜູ້ດຳລົງຕຳແໜ່ງບໍລິຫານອື່ນ ຂອງນະຄອນ ພາຍຫຼັງການປະກອບຄຳເຫັນຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ;

5. ສະເໜີ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກ່ຽວກັບ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງຕາແສງ ພາຍຫຼັງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງຂັ້ນເມືອງ ມີຄຳເຫັນ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານຄະນະກຳມະການປົກຄອງຕາແສງ ແລະ ຜູ້ດຳລົງຕຳແໜ່ງບໍລິຫານອື່ນຂອງຕາແສງ;

7. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກ ນິຕິກຳຂອງ ນະຄອນ, ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ຂອງນະຄອນ ແລະ ຂັ້ນລຸ່ມ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ;

8. ສະເໜີຂັ້ນເທິງພິຈາລະນາ ໂຈະ ຫຼື ຍົກເລີກ ນິຕິກຳ ຂອງຂະແໜງການທີ່ຂັດກັບກົດໝາຍ;

9. ສັ່ງຈ່າຍງົບປະມານ ຂອງນະຄອນ ຕາມແຜນງົບປະມານທີ່ສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ;

10. ເຂົ້າຮ່ວມກອງປະຊຸມ ຂອງຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຕາມການເຊີນ;

11. ຮັບຜິດຊອບຕໍ່ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກ່ຽວກັບຜົນສຳເລັດ, ຄວາມບົກພ່ອງ ໃນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

12. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງນະຄອນ ຕໍ່ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະກຳມະການປົກຄອງນະຄອນ**

ຮອງປະທານຄະນະກຳມະການປົກຄອງນະຄອນ ຊ່ວຍປະທານຄະນະກຳມະການປົກຄອງນະຄອນ ໃນການຊີ້ນຳວຽກງານ ຂອງຄະນະກຳມະການປົກຄອງນະຄອນ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານຄະນະກຳມະການປົກຄອງນະຄອນ.

ໃນກໍລະນີປະທານຄະນະກຳມະການປົກຄອງນະຄອນ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນໃດໜຶ່ງ ຮອງປະທານຄະນະກຳມະການປົກຄອງນະຄອນ ຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມຂອງຄະນະກຳມະການປົກຄອງນະຄອນ

**ມາດຕາ 56 (ປັບປຸງ) ກອງປະຊຸມ**

ກອງປະຊຸມຂອງຄະນະກຳມະການປົກຄອງນະຄອນ ເປີດຂຶ້ນເດືອນລະເທື່ອ ໂດຍແມ່ນປະທານຄະນະກຳມະການປົກຄອງນະຄອນ ເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມ ຂອງຄະນະກຳມະການປົກຄອງນະຄອນ ປະກອບດ້ວຍ ຮອງປະທານຄະນະກຳມະການປົກຄອງນະຄອນ, ຫົວໜ້າຫ້ອງວ່າການ, ຫົວໜ້າຫ້ອງການ, ຫົວໜ້າອົງການລັດທຽບເທົ່າຫ້ອງການ ຂອງນະຄອນ. ນອກຈາກນີ້ ຖ້າເຫັນວ່າມີຄວາມຈຳເປັນ ອາດເຊີນຜູ້ຕາງໜ້າຈາກພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີ ມີຄວາມຈຳເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງຂອງ ປະທານຄະນະກຳມະການປົກຄອງນະຄອນ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສຳຄັນນັ້ນ ຕ້ອງເຮັດມະຕິຂອງກອງປະຊຸມ.

**ມາດຕາ 57 (ໃໝ່) ເນື້ອໃນທີ່ຕ້ອງນຳເຂົ້າກອງປະຊຸມ**

ເນື້ອໃນທີ່ຕ້ອງນຳເຂົ້າ ພິຈາລະນາ ແລະ ຕົກລົງໃນ ກອງປະຊຸມຂອງຄະນະກຳມະການປົກຄອງນະຄອນ ມີ ດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ການດັດແກ້ແຜນງົບປະມານ ປະຈຳປີ ຂອງນະຄອນ;

2. ການກຳນົດເຂດແດນ ແລະ ໂຄງປະກອບການຈັດຕັ້ງຂອງນະຄອນ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ການກຳນົດເຂດແດນຂອງ ຕາແສງ, ບ້ານ ແລະ ການປ່ຽນຊື່ ຕາແສງ, ບ້ານ;

3. ຮ່າງນິຕິກຳຕ່າງໆ;

4. ໂຄງການລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;

5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

6. ວຽກງານນະໂຍບາຍ ແລະ ພະນັກງານ;

7. ບົດລາຍງານຮອບດ້ານ ຕໍ່ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ;

8. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

## ພາກທີ VI
## ຕາແສງ ແລະ ຄະນະກຳມະການປົກຄອງຕາແສງ
### ໝວດທີ 1
### ຕາແສງ ແລະ ການສ້າງຕັ້ງຕາແສງ

**ມາດຕາ 58 (ໃໝ່) ຕາແສງ**

ຕາແສງ ແມ່ນ ເຂດການປົກຄອງທ້ອງຖິ່ນຂັ້ນລຸ່ມສຸດ ທີ່ຂຶ້ນກັບ ເມືອງ, ນະຄອນ ຊຶ່ງປະກອບດ້ວຍ ຫຼາຍບ້ານ.

ບ້ານ ແມ່ນ ການຈັດຕັ້ງຊຸມຊົນ ເພື່ອຄຸ້ມຄອງບໍລິຫານພາຍໃນຊຸມຊົນ ຊຶ່ງປະກອບດ້ວຍ ຫຼາຍຄອບຄົວ, ມີ ເຂດນ້ຳ, ແດນດິນ ທີ່ລັດມອບສິດໃຫ້ ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້.

ສຳລັບ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງບ້ານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 59 (ໃໝ່) ການສ້າງຕັ້ງຕາແສງ**

ຕາແສງ ຖືກສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ ແລະ ກຳນົດເຂດແດນ ຕາມການຕົກລົງ ຂອງຄະນະກຳມະການ ປົກຄອງຂັ້ນແຂວງ ພາຍຫຼັງສະພາປະຊາຊົນທ້ອງຖິ່ນ ຮັບຮອງເອົາ.

ຂັ້ນຕອນ ແລະ ວິທີການ ຄົ້ນຄວ້າ ເພື່ອສ້າງຕັ້ງຕາແສງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 60 (ໃໝ່) ເງື່ອນໄຂການສ້າງຕັ້ງຕາແສງ**

ການສ້າງຕັ້ງຕາແສງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທີ່ຕັ້ງທາງດ້ານພູມສາດທີ່ເໝາະສົມແກ່ ການປົກຄອງ ແລະ ການສະໜອງການບໍລິການຂອງລັດ ໃຫ້ແກ່ປະຊາຊົນ;

2. ມີຈຳນວນພົນລະເມືອງ:

2.1. ຕາແສງຢູ່ໃນຕົວເມືອງ ມີພົນລະເມືອງຢ່າງໜ້ອຍ ສິບສີ່ພັນຄົນ;

2.2. ຕາແສງຢູ່ເຂດທົ່ງພຽງ ມີພົນລະເມືອງຢ່າງໜ້ອຍ ເຈັດພັນຄົນ;

2.3. ຕາແສງຢູ່ເຂດພູດອຍ ມີພົນລະເມືອງຢ່າງໜ້ອຍ ສອງພັນແປດຮ້ອຍຄົນ;

3. ມີຢ່າງໜ້ອຍ ສາມບ້ານ ຂຶ້ນໄປ;

4. ມີໂຄງລ່າງພື້ນຖານ ແລະ ເງື່ອນໄຂໃນການພັດທະນາເສດຖະກິດ-ສັງຄົມ.

ໃນກໍລະນີ ບໍ່ຄົບເງື່ອນໄຂໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ແຕ່ມີຄວາມຈຳເປັນສ້າງຕັ້ງຕາແສງ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ເປັນຜູ້ພິຈາລະນາຕົກລົງ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງຕາແສງ

### ມາດຕາ 61 (ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງຄະນະກຳມະການປົກຄອງຕາແສງ

ຄະນະກຳມະການປົກຄອງຕາແສງ ແມ່ນ ອົງການບໍລິຫານຂັ້ນລຸ່ມສຸດ ຂອງອົງການປົກຄອງທ້ອງຖິ່ນ ມີພາລະບົດບາດຄຸ້ມຄອງບໍລິຫານລັດ ທາງດ້ານ ການເມືອງ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໃນທ້ອງຖິ່ນຕົນ ຕາມການແບ່ງຂັ້ນຄຸ້ມຄອງ; ຊີ້ນຳ, ກວດກາ ການຈັດຕັ້ງປະຕິບັດແຜນພັດທະນາບ້ານ ໃນຂອບເຂດການຄຸ້ມຄອງຂອງຕົນ.

### ມາດຕາ 62 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງຕາແສງ

ຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ຂອງຂັ້ນເທິງ;

2. ສ້າງ ແລະ ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ຂອງຕາແສງ;

3. ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ;

4. ຊຸກຍູ້, ປຸກລະດົມ, ອຳນວຍຄວາມສະດວກ ກ່ຽວກັບວຽກງານເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ;

5. ຈັດຕັ້ງ, ອຳນວຍ, ຄວບຄຸມ ແລະ ຕິດຕາມ ກວດກາການເຄື່ອນໄຫວປະຕິບັດໜ້າທີ່ ຂອງໜ່ວຍງານຕາແສງ ແລະ ຂອງບ້ານ;

6. ໂຄສະນາ ເຜີຍແຜ່ ແລະ ໃຫ້ຄວາມຮູ້ກ່ຽວກັບວຽກງານສຸຂານາໄມແກ່ປະຊາຊົນ, ສົ່ງເສີມດ້ານສາທາລະນະສຸກ, ພັດທະນາການສຶກສາ, ກິລາ-ກາຍຍະກຳ ແລະ ສິດສະເໝີພາບລະຫວ່າງ ຍິງ-ຊາຍ;

7. ປົກປັກຮັກສາ, ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ ແລະ ຊົນເຜົ່າ; ສົ່ງເສີມການພັດທະນາສີມືແຮງງານ ແລະ ຄຸ້ມຄອງແຮງງານຕາມພາລະບົດບາດ ແລະ ຕາມການ ແບ່ງຂັ້ນຄຸ້ມຄອງ;

8. ເສີມຂະຫຍາຍຄວາມສາມັກຄີ ຂອງປະຊາຊົນລາວບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ; ຄຸ້ມຄອງພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ວຽກງານເຜົ່າ ແລະ ສາສະໜາ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ;

9. ຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງແຫຼ່ງລາຍຮັບ ແລະ ຈັດເກັບລາຍຮັບ ໃຫ້ຖືກຕ້ອງ; ຄຸ້ມຄອງຫົວໜ່ວຍທຸລະກິດ, ອຸດສາຫະກຳ, ການຄ້າ, ການບໍລິການ ແລະ ອື່ນໆ ຕາມການແບ່ງຂັ້ນຄຸ້ມຄອງ;

10. ຄຸ້ມຄອງ ແລະ ປະຕິບັດ ແຜນລາຍຮັບ-ລາຍຈ່າຍ ຕາມການມອບໝາຍ ຂອງຄະນະກຳມະການປົກຄອງ ເມືອງ, ນະຄອນ;

11. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກນິຕິກຳ ຂອງຕາແສງ ແລະ ຂອງບ້ານ ທີ່ຂັດກັບກົດໝາຍ, ຍົກເວັ້ນຄຳຕົກລົງ ກ່ຽວກັບການດຳເນີນຄະດີຂອງ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາ ໂຈະ ຫຼື ຍົກເລີກ ນິຕິກຳ ຂອງຂະແໜງການທີ່ຂັດກັບກົດໝາຍ;

12. ຄຸ້ມຄອງການເຄື່ອນໄຫວ ຂອງ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ມາຕັ້ງຖິ່ນຖານ ແລະ ຍົກຍ້າຍໄປມາ ຢູ່ໃນຕາແສງ; ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ສະກັດກັ້ນ ແລະ ຕ້ານ ປາກົດການຫຍໍ້ທໍ້ ພາຍໃນຕາແສງ;

13. ຮັບ, ພິຈາລະນາ ແກ້ໄຂ ຄຳສະເໜີ, ສຶກສາອົບຮົມ ແລະ ໄກ່ເກ່ຍຂໍ້ຂັດແຍ່ງ ຂອງປະຊາຊົນ ພາຍໃນຕາແສງ;

14. ຄົ້ນຄວ້າ ໂຄງປະກອບການຈັດຕັ້ງ ແລະ ການກຳນົດເຂດແດນ ຂອງຕາແສງ; ການ ສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ, ກຳນົດເຂດແດນ ແລະ ການປ່ຽນຊື່ ບ້ານ;

15. ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມການພັດທະນາຕາແສງ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ໃນຕາແສງ;

16. ສ້າງ, ບຳລຸງ ຍົກລະດັບຄວາມຮູ້, ຄວາມສາມາດ ທາງດ້ານ ການເມືອງ, ການປົກຄອງ, ວິຊາສະເພາະ ໃຫ້ພະນັກງານ-ລັດຖະກອນຂອງຕົນ ແລະ ຂອງບ້ານ;

17. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວວຽກງານຮອບດ້ານຂອງຕາແສງ ຕໍ່ ຄະນະກຳມະການປົກຄອງ ເມືອງ, ນະຄອນ ແລະ ອົງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ຂອງຄະນະກຳມະການປົກຄອງຕາແສງ

### ມາດຕາ 63 (ໃໝ່) ໂຄງປະກອບກົງຈັກ

ຄະນະກຳມະການປົກຄອງ ຕາແສງ ມີ ໜ່ວຍງານ ເປັນກົງຈັກຊ່ວຍວຽກ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ເພື່ອປະຕິບັດວຽກງານ ດັ່ງນີ້:

1. ວຽກງານບໍລິຫານ-ປົກຄອງ;
2. ວຽກງານພັກ-ອົງການຈັດຕັ້ງມະຫາຊົນ;
3. ວຽກງານເສດຖະກິດ-ການເງິນ;
4. ວຽກງານວັດທະນະທຳ-ສັງຄົມ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ສິດ ແລະ ໜ້າທີ່ ຂອງແຕ່ລະໜ່ວຍງານ ຄະນະກຳມະການປົກຄອງຕາແສງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 64 (ໃໝ່) ໂຄງປະກອບບຸກຄະລາກອນ**

ຄະນະກໍາມະການປົກຄອງ ຕາແສງ ປະກອບດ້ວຍບຸກຄະລາກອນ ດັ່ງນີ້:

1. ປະທານ ຄະນະກໍາມະການປົກຄອງ ຕາແສງ;
2. ຮອງປະທານ ຄະນະກໍາມະການປົກຄອງ ຕາແສງ;
3. ກໍາມະການ ຄະນະກໍາມະການປົກຄອງ ຕາແສງ ທີ່ເປັນຫົວໜ້າໜ່ວຍງານ.

ນອກຈາກນີ້ ຍັງມີພະນັກງານຊ່ວຍວຽກຈໍານວນໜຶ່ງ.

**ມາດຕາ 65 (ໃໝ່) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ປະທານຄະນະກໍາມະການປົກຄອງຕາແສງ**

ປະທານຄະນະກໍາມະການປົກຄອງຕາແສງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານຄະນະກໍາມະການປົກຄອງ ເມືອງ, ນະຄອນ ພາຍຫຼັງໄດ້ຮັບການເຫັນດີຈາກ ປະທານຄະນະກໍາມະການປົກຄອງຂັ້ນແຂວງ.

**ມາດຕາ 66 (ໃໝ່) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງປະທານຄະນະກໍາມະການປົກຄອງຕາແສງ**

ຮອງປະທານຄະນະກໍາມະການປົກຄອງຕາແສງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານຄະນະກໍາມະການປົກຄອງ ເມືອງ, ນະຄອນ ຕາມການສະເໜີຂອງປະທານຄະນະກໍາມະການປົກຄອງຕາແສງ.

**ມາດຕາ 67 (ໃໝ່) ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງຫົວໜ້າໜ່ວຍງານ**

ຫົວໜ້າໜ່ວຍງານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານຄະນະກໍາມະການປົກຄອງຕາແສງ ພາຍຫຼັງໄດ້ຮັບການເຫັນດີ ຈາກປະທານຄະນະກໍາມະການປົກຄອງ ເມືອງ, ນະຄອນ.

**ມາດຕາ 68 (ໃໝ່) ອາຍຸການ ຂອງປະທານຄະນະກໍາມະການປົກຄອງຕາແສງ**

ປະທານຄະນະກໍາມະການປົກຄອງຕາແສງ ມີອາຍຸການ ສະໄໝລະ ຫ້າປີ ແລະ ສາມາດດໍາລົງຕໍາແໜ່ງ ຢູ່ບ່ອນເກົ່າໄດ້ ບໍ່ເກີນ ສອງສະໄໝ ຕິດຕໍ່ກັນ.

ໃນກໍລະນີ ປະທານຄະນະກໍາມະການປົກຄອງຕາແສງ ຫາກໝົດອາຍຸການແລ້ວ ແຕ່ປະທານຄະນະກໍາມະການປົກຄອງ ເມືອງ, ນະຄອນ ຍັງບໍ່ທັນໄດ້ແຕ່ງຕັ້ງປະທານຄະນະກໍາມະການປົກຄອງຕາແສງ ຜູ້ໃໝ່ນັ້ນ ໃຫ້ປະທານຄະນະກໍາມະການປົກຄອງຕາແສງຜູ້ເກົ່າ ສືບຕໍ່ປະຕິບັດໜ້າທີ່ຈົນກວ່າຈະມີການແຕ່ງຕັ້ງຜູ້ໃໝ່.

ການແຕ່ງຕັ້ງປະທານຄະນະກໍາມະການປົກຄອງຕາແສງຜູ້ໃໝ່ ຕ້ອງດໍາເນີນໃຫ້ສໍາເລັດ ພາຍໃນເວລາເກົ້າສິບວັນ ຫຼັງຈາກອາຍຸການ ຂອງປະທານຄະນະກໍາມະການປົກຄອງຕາແສງຜູ້ເກົ່າ ສິ້ນສຸດລົງ.

## ໝວດທີ 4
## ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງປະທານຄະນະກໍາມະການປົກຄອງຕາແສງ

**ມາດຕາ 69 (ໃໝ່) ພາລະບົດບາດ ຂອງປະທານຄະນະກໍາມະການປົກຄອງຕາແສງ**

ປະທານຄະນະກໍາມະການປົກຄອງຕາແສງ ເປັນຫົວໜ້າຄະນະກໍາມະການປົກຄອງຕາແສງ, ເປັນຕົວແທນ ແລະ ຮັບຜິດຊອບຕໍ່ຄະນະກໍາມະການປົກຄອງຂັ້ນເມືອງ; ນໍາພາ ຊີ້ນໍາ ຄະນະກໍາມະການປົກຄອງຕາແສງ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 61 ແລະ ມາດຕາ 62 ຂອງກົດໝາຍສະບັບນີ້.

**ມາດຕາ 70 (ໃໝ່) ສິດ ແລະ ໜ້າທີ່ ຂອງປະທານຄະນະກຳມະການປົກຄອງຕາແສງ**

ປະທານຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມຄະນະກຳມະການປົກຄອງ ຕາແສງ;

2. ຊີ້ນຳ, ອຳນວຍ, ຄວບຄຸມ, ວຽກງານ ຂອງຄະນະກຳມະການປົກຄອງ ຕາແສງ; ກວດກາການປະຕິບັດ ມະຕິກອງປະຊຸມສະພາປະຊາຊົນທ້ອງຖິ່ນ, ມະຕິກອງປະຊຸມຄະນະກຳມະການປົກຄອງຕາແສງ ແລະ ການເຄື່ອນໄຫວ ຂອງໜ່ວຍງານຕາແສງ ທີ່ຂຶ້ນກັບຕົນ;

3. ຮັບຮອງເອົາຜົນການ ເລືອກຕັ້ງ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ປະທານບ້ານ, ຮອງປະທານບ້ານ ແລະ ຮັບຮອງເອົາກົດລະບຽບບ້ານ;

4. ສະເໜີປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ ກ່ຽວກັບໂຄງປະກອບການຈັດຕັ້ງ ແລະ ເຂດແດນ ຂອງຕາແສງ; ການສ້າງຕັ້ງ, ໂຮມເຂົ້າ, ຍຸບເລີກ, ການກຳນົດເຂດແດນ ແລະ ການປ່ຽນຊື່ ບ້ານ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

5. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງປະທານຄະນະກຳມະການປົກຄອງຕາແສງ ຕໍ່ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າໜ່ວຍງານ ຂອງຄະນະກຳມະການປົກຄອງຕາແສງ ຕາມການເຫັນດີຂອງ ປະທານຄະນະກຳມະການປົກຄອງຂັ້ນເມືອງ;

7. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ; ສັ່ງໂຈະ ຫຼື ຍົກເລີກ ນິຕິກຳ ຂອງຕາແສງ ແລະ ຂອງບ້ານ ທີ່ຂັດກັບກົດໝາຍ, ຍົກເວັ້ນຂໍ້ຕົກລົງ ກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ; ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກນິຕິກຳ ຂອງຂະແໜງການທີ່ຂັດກັບ ລັດຖະທຳມະນູນ ແລະ ກົດໝາຍ;

8. ອອກໜັງສື ແລະ ໃບຢັ້ງຢືນ ໃຫ້ປະຊາຊົນ ແລະ ການຈັດຕັ້ງ ຕາມການແບ່ງຂັ້ນຄຸ້ມຄອງ;

9. ສັ່ງຈ່າຍງົບປະມານ ຂອງຕາແສງ;

10. ເຂົ້າຮ່ວມກອງປະຊຸມ ຂອງຄະນະກຳມະການປົກຄອງ ເມືອງ, ນະຄອນ ຕາມການເຊີນ;

11. ຮັບຜິດຊອບ ຕໍ່ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ ກ່ຽວກັບຜົນສຳເລັດ ແລະ ຄວາມບົກພ່ອງ ໃນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ລວມທັງສະພາບການເຄື່ອນໄຫວ ວຽກງານຮອບດ້ານຂອງຕາແສງ ຕໍ່ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 71 (ໃໝ່) ສິດ ແລະ ໜ້າທີ່ ຂອງຮອງປະທານຄະນະກຳມະການປົກຄອງຕາແສງ**

ຮອງປະທານຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານຄະນະກຳມະການປົກຄອງຕາແສງ ໃນການຊີ້ນຳວຽກງານຂອງຕາແສງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງປະທານຄະນະກຳມະການປົກຄອງຕາແສງ.

ໃນກໍລະນີປະທານຄະນະກຳມະການປົກຄອງຕາແສງ ບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຫດຜົນໃດໜຶ່ງ ຮອງປະທານຄະນະກຳມະການປົກຄອງຕາແສງ ຜູ້ໄດ້ຮັບມອບໝາຍ ເປັນຜູ້ຮັກສາການແທນ.

## ໝວດທີ 5
## ກອງປະຊຸມຂອງຄະນະກຳມະການປົກຄອງຕາແສງ

### ມາດຕາ 72 (ໃໝ່) ກອງປະຊຸມ

ກອງປະຊຸມຂອງຄະນະກຳມະການປົກຄອງຕາແສງ ເປີດຂຶ້ນເດືອນລະເທື່ອ ໂດຍປະທານຄະນະກຳມະການປົກຄອງຕາແສງ ເປັນຜູ້ຮຽກໂຮມ ແລະ ເປັນປະທານ. ຜູ້ເຂົ້າຮ່ວມກອງປະຊຸມ ຂອງຄະນະກຳມະການປົກຄອງຕາແສງ ປະກອບດ້ວຍ ຮອງປະທານຄະນະກຳມະການປົກຄອງຕາແສງ, ກຳມະການ ຄະນະກຳມະການປົກຄອງຕາແສງ, ຫົວໜ້າໜ່ວຍງານ ຂອງຕາແສງ. ນອກຈາກນີ້ ຖ້າຫາກມີຄວາມຈຳເປັນ ອາດເຊີນຜູ້ຕາງໜ້າຈາກພາກສ່ວນອື່ນເຂົ້າຮ່ວມນຳກໍໄດ້.

ໃນກໍລະນີມີຄວາມຈຳເປັນ ແລະ ຮີບດ່ວນ ອາດເປີດກອງປະຊຸມວິສາມັນ ຕາມການຕົກລົງ ຂອງປະທານຄະນະກຳມະການປົກຄອງຕາແສງ.

ໃນກອງປະຊຸມແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ຊຶ່ງເຊັນໂດຍຜູ້ບັນທຶກກອງປະຊຸມ ແລະ ເຊັນຢັ້ງຢືນໂດຍປະທານກອງປະຊຸມ ແລ້ວສົ່ງໃຫ້ຜູ້ເຂົ້າຮ່ວມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີມີການຕົກລົງບັນຫາສຳຄັນນັ້ນ ຕ້ອງເຮັດມະຕິກອງປະຊຸມ.

### ມາດຕາ 73 (ໃໝ່) ເນື້ອໃນທີ່ຕ້ອງນຳເຂົ້າກອງປະຊຸມ

ເນື້ອໃນທີ່ຕ້ອງນຳເຂົ້າພິຈາລະນາ ແລະ ຕົກລົງໃນກອງປະຊຸມ ຂອງຄະນະກຳມະການປົກຄອງຕາແສງ ມີດັ່ງນີ້:

1. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳປີ ຂອງຕາແສງ;
2. ໂຄງປະກອບການຈັດຕັ້ງ ຂອງຕາແສງ; ການສ້າງຕັ້ງ, ໂຮມເຂົ້າ ຫຼື ຍຸບເລີກ, ການກຳນົດເຂດແດນ ແລະ ການປ່ຽນຊື່ ບ້ານ;
3. ຮ່າງນິຕິກຳຕ່າງໆ;
4. ໂຄງການພັດທະນາຕາແສງ;
5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ວຽກງານ ນະໂຍບາຍ ແລະ ພະນັກງານ;
7. ບົດລາຍງານຮອບດ້ານ ຕໍ່ປະທານຄະນະກຳມະການປົກຄອງ ເມືອງ, ນະຄອນ;
8. ຂໍ້ຂັດແຍ່ງຂອງປະຊາຊົນ;
9. ບັນຫາທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ;
10. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

# ພາກທີ VII
# ລະບອບວິທີເຮັດວຽກ, ການເງິນ ແລະ ການພົວພັນ ຂອງອົງການປົກຄອງທ້ອງຖິ່ນ

**ມາດຕາ 74 (ປັບປຸງ) ລະບອບວິທີເຮັດວຽກ**

ອົງການປົກຄອງທ້ອງຖິ່ນ ເຄື່ອນໄຫວວຽກງານ ຕາມລະບອບວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກຕາມຫຼັກການ ລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ;

2. ເຮັດວຽກຢ່າງມີ ແຜນການ, ແຜນງານ, ໂຄງການ, ມີການກຳນົດເວລາ, ມີການຄິດໄລ່ປະສິດທິຜົນ ໂດຍອີງຕາມຈຸດພິເສດ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ;

3. ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ;

4. ຕິດຕາມ ກວດກາ, ປະເມີນຜົນ ແລະ ສະຫຼຸບ ການເຄື່ອນໄຫວວຽກງານຢູ່ທ້ອງຖິ່ນຂອງຕົນ ແລ້ວລາຍງານໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ.

ຄະນະກຳມະການປົກຄອງແຕ່ລະຂັ້ນ ຕ້ອງໄດ້ຮັບການກວດກາຈາກ ສະພາປະຊາຊົນທ້ອງຖິ່ນ, ອົງການກວດກາ ຂັ້ນຂອງຕົນ ແລະ ຂອງຂັ້ນເທິງ ຢ່າງເປັນປົກກະຕິ.

**ມາດຕາ 75 (ປັບປຸງ) ການເງິນ**

ອົງການປົກຄອງທ້ອງຖິ່ນ ມີງົບປະມານຮັບໃຊ້ການເຄື່ອນໄຫວວຽກງານຂອງຕົນ ໂດຍປະຕິບັດຕາມຫຼັກການລວມສູນງົບປະມານແຫ່ງລັດ, ຕາມການແບ່ງຄວາມຮັບຜິດຊອບ ແລະ ແບ່ງຂັ້ນຄຸ້ມຄອງແຕ່ລະຂັ້ນ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

**ມາດຕາ 76 (ປັບປຸງ) ການພົວພັນກັບສະພາປະຊາຊົນທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ພົວພັນກັບສະພາປະຊາຊົນທ້ອງຖິ່ນ ດ້ວຍການສົມທົບກັນ ຕາມກໍລະນີ ດັ່ງນີ້:

1. ການສ້າງ ແລະ ປັບປຸງ ນິຕິກຳຂອງທ້ອງຖິ່ນ;

2. ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ທີ່ຈະສະເໜີໃຫ້ ສະພາປະຊາຊົນທ້ອງຖິ່ນພິຈາລະນາ;

3. ການຄົ້ນຄວ້າບຸກຄະລາກອນ ທີ່ຈະສະເໜີໃຫ້ສະພາປະຊາຊົນທ້ອງຖິ່ນ ພິຈາລະນາ, ຮັບຮອງເອົາການສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ;

4. ການຄົ້ນຄວ້າປະກອບຄຳເຫັນ ກ່ຽວກັບການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ;

5. ການເຂົ້າຮ່ວມ ແລະ ໃຫ້ການຊີ້ແຈງຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ;

6. ການລາຍງານ, ອະທິບາຍ ແລະ ແກ້ຂໍ້ຂ້ອງໃຈ, ຕອບການຊັກຖາມຂອງສະມາຊິກສະພາປະຊາຊົນຂັ້ນແຂວງ;

7. ການສະໜອງຂໍ້ມູນ ຕາມການສະເໜີຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ;

8. ບັນຫາອື່ນທີ່ເຫັນວ່າມີຄວາມ ສຳຄັນ ແລະ ຈຳເປັນ.

**ມາດຕາ 77 (ປັບປຸງ) ການພົວພັນກັບ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ສົມທົບກັບ ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທ້ອງຖິ່ນ ໃນການຕິດຕາມ, ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ການສະກັດກັ້ນສິ່ງຫຍໍ້ທໍ້ ໃນສັງຄົມ.

ໃນກໍລະນີຈໍາເປັນ ອົງການປົກຄອງທ້ອງຖິ່ນ ອາດເຊີນ ຫົວໜ້າອົງການໄອຍະການປະຊາຊົນ, ປະທານສານປະຊາຊົນ ທ້ອງຖິ່ນ ເຂົ້າຮ່ວມກອງປະຊຸມຂອງຕົນກໍໄດ້.

**ມາດຕາ 78 (ປັບປຸງ) ການພົວພັນກັບແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນ ປະສານສົມທົບກັບ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ທ້ອງຖິ່ນ ເພື່ອປຶກສາຫາລື, ແລກປ່ຽນຄວາມຄິດເຫັນ, ປຸກລະດົມ, ຊຸກຍູ້ ໃຫ້ອົງການຈັດຕັ້ງດັ່ງກ່າວ ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ຮັບປະກັນໃຫ້ການເຄື່ອນໄຫວວຽກງານມີປະສິດທິຜົນ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 79 (ປັບປຸງ) ຕາປະທັບ**

ຄະນະກໍາມະການປົກຄອງແຕ່ລະຂັ້ນ ມີຕາປະທັບຂອງຕົນ ເພື່ອນໍາໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 80 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສປປ ລາວ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 81 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ກໍລະກົດ 2025 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**